ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທະນາຄານແຫ່ງ ສປປ ລາວ ຮ່ວມກັບກອງທຶນການເງິນສາກົນ (International Monetary Fund: IMF) ສຳເລັດການເປັນເຈົ້າພາບຮ່ວມຈັດກອງປະຊຸມສຳມະນາລະດັບສູງ ໃນຫົວຂໍ້ "ການສ້າງໂອກາດໃໝ່ໃນຍຸກແຫ່ງການປ່ຽນແປງ"




ໃນວັນທີ 3 ເມສາ 2024, ທີ່ ແຂວງ ຫຼວງພະບາງ, ສປປ ລາວ, ທະນາຄານແຫ່ງ ສປປ ລາວ ຮ່ວມກັບກອງທຶນການເງິນສາກົນ (International Monetary Fund: IMF) ໄດ້ຈັດກອງປະຊຸມສຳມະນາລະດັບສູງໃນຫົວຂໍ້: "ການສ້າງໂອກາດໃໝ່ໃນຍຸກແຫ່ງການປ່ຽນແປງ (Making the Most of Opportunity in a Changing World)" ພາຍໃຕ້ຂະບວນກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 11 ທີ່ໄດ້ຈັດຢູ່ ສປປ ລາວ ໃນຖານະເປັນເຈົ້າພາບກອງປະຊຸມອາຊຽນໃນປີ 2024. ໃຫ້ກຽດເຂົ້າຮ່ວມໂດຍທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ທ່ານ Kenji Okamura, ຮອງຜູ້ອຳນວຍການໃຫຍ່ IMF, ທ່ານ ນ. Nguyen Thi Hong, ຜູ້ວ່າການ ທະນາຄານແຫ່ງລັດຫວຽດນາມ, ທ່ານ Abdul Rasheed Ghaffour, ຜູ້ວ່າການ ທະນາຄານກາງມາເລເຊຍ, ທ່ານ Sethaput Suthiwartnarueput, ຜູ້ວ່າການ ທະນາຄານແຫ່ງປະເທດໄທ, ທ່ານ Alasdair Scott, ຫົວໜ້າຄະນະປະເມີນເສດຖະກິດມະຫາພາກ ສຳລັບ ສປປ ລາວ, ຮອງຫົວໜ້າກົມອາຊີ-ປາຊີຟິກ ຂອງ IMF, ທ່ານ Phongsavanh Phomkong, ຫົວໜ້າຫ້ອງການ IFC ປະຈຳ ສປປ ລາວ ແລະ ຜູ້ແທນປະເທດອາຊຽນ.




ກອງປະຊຸມສຳມະນາລະດັບສູງຄັ້ງນີ້, ໄດ້ປຶກສາຫາລືການຫັນປ່ຽນຢ່າງວ່ອງໄວຂອງເສດຖະກິດອາຊຽນ, ລວມທັງການຫັນເປັນອຸດສາຫະກຳຢ່າງເຂັ້ມງວດແລະການປ່ຽນແປງດ້ານເສດຖະກິດ. ການປ່ຽນແປງຢ່າງໄວວາຈາກເສດຖະກິດທີ່ເພິ່ງພາພາກກະສິກຳເປັນສ່ວນໃຫຍ່ ໄປສູ່ການຂະຫຍາຍພາກອຸດສາຫະກຳເຮັດໃຫ້ເກີດການປ່ຽນແປງທີ່ສຳຄັນໃນການຈ້າງງານ ແລະ ການລົງທຶນ, ສ້າງຂໍ້ສັງເກດສຳຄັນກ່ຽວກັບອະນາຄົດຂອງການລົງທຶນ ແລະ ກະແສເງິນທຶນ. ນອກນີ້, ຜົນກະທົບທີ່ອາດເກີດຂຶ້ນຈາກການນຳໃຊ້ເຕັກໂນໂລຊີໃໝ່ ເປັນຕົ້ນ: ລະບົບອັດຕະໂນມັດ ແລະ ປັນຍາປະດິດ (AI) ຍັງໄດ້ກະຕຸ້ນໃຫ້ເກີດຄຳຖາມກ່ຽວກັບການຫັນປ່ຽນໄປສູ່ເສດຖະກິດ "ສີຂຽວ" ແລະ ຄວາມຕ້ອງການດ້ານການເງິນ ເພື່ອຮັບມືບັນຫາການປ່ຽນແປງດິນຟ້າອາກາດ. ພ້ອມນີ້, ໃນກອງປະຊຸມໄດ້ປຶກສາຫາລືກ່ຽວກັບຄວາມສຳຄັນຂອງການລວມເອົາການປ່ຽນແປງທາງດ້ານປະຊາກອນເຂົ້າໃນຂອບນະໂຍບາຍການເງິນ ແລະ ການປະເມີນຄວາມໝັ້ນຄົງທາງດ້ານການເງິນ, ເຊັ່ນດຽວກັນກັບບົດບາດຂອງທະນາຄານກາງໃນການຄຸ້ມຄອງຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ. ກອງປະຊຸມສຳມະນາຍັງໄດ້ຕີລາຄາສູງກ່ຽວກັບຜົນກະທົບທີ່ອາດເກີດຂຶ້ນຈາກການນຳໃຊ້ເຕັກໂນໂລຊີໃໝ່ຕໍ່ຕະຫຼາດແຮງງານ ແລະ ບົດບາດຂອງການຮ່ວມມືໃນພາກພື້ນອາຊຽນໃນການແກ້ໄຂສິ່ງທ້າທາຍດັ່ງກ່າວ ແລະ ໂອກາດໃໝ່ໃນຍຸກແຫ່ງການປ່ຽນແປງ.

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ